# ຂໍ້ມູນ ຂອງທ່ານ

# ມັນເປັນ ຂອງສ່ວນຕົວ

## ໃນເວລາ ທີ່ທ່ານເປັນຜູ້ຊົມໃຊ້ ບໍຣິການນີ້

## ຊິມີຫຍັງເກີດຂຶ້ນ ກັບ ຂໍ້ມູນ ຂອງທ່ານ ?

**ພວກຂ້າພະເຈົ້າ ແມ່ນໃຜ ?**

ພວກຂ້າພະເຈົ້າ ແມ່ນນຶ່ງໃນບັນດາພວກ ບໍຣິການ ດ້ານອານາໄມ ແລະ ການດູແລຊຸມຊົນໃນທ້ອງຖິ່ນຂອງທ່ານ, ທັງໝົດ ແມ່ນເຮັດວຽກຄຽງຄູ່ກັນ ເພື່ອບັນລຸເຖິງຄວາມຕ້ອງ ການຂອງ ທ່ານ.

**ພວກຂ້າພະເຈົ້າເກັບກໍາຂໍ້ມູນອັນໃດແດ່ ກ່ຽວກັບ ທ່ານ ?**

ພວກຂ້າພະເຈົ້າເກັບຮັກສາ ຊື່ ແລະ ບັນທຶກ ລາຍລະອຽດ ເພື່ອການພົວພັນ ກ່ຽວກັບການຊົມໃຊ້ຂອງທ່ານ. ສ່ວນລາຍລະອຽດອື່ນໆ ເຊັ່ນວ່າ ແຜນການດູແລທ່ານ ແລະ ຂໍ້ມູນກ່ຽວກັບ ສຸກຂະ ພາບຂອງທ່ານ ຈະຖືກບັນທຶກໄວ້ ໃນແຕ່ລະຄັ້ງ ທີ່ ທ່ານມາຮັບການບໍຣິການ.

**ເປັນຫຍັງ ພວກຂ່າພະເຈົ້າ ຈຶ່ງເກັບກໍາຂໍ້ມູນ ກ່ຽວກັບທ່ານ ?**

ຂໍ້ມູນທີ່ພວກຂ້າພະເຈົ້າເກັບກໍານັ້ນ ຊ່ວຍໃຫ້ ພວກຂ້າພະເຈົ້າຕິດຕາມລາຍລະອຽດໃໝ່ໆ ກ່ຽວກັບ ຄວາມຕ້ອງການຂອງທ່ານ, ເພື່ອໃຫ້ພວກຂ້າພະເຈົ້າ ໄດ້ໃຫ້ການດູແລທ່ານ ຕາມວິທີ ທາງ ທີ່ດີທີ່ສຸດ ທີ່ສາມາດເຮັດໄດ້. ແລະ ພວກຂ້າ ພະເຈົ້າ ກໍຍັງນໍາໃຊ້ ຂໍ້ມູນນັ້ນ ເພື່ອຈັດການ ແລະ ວາງແຜນ ການບໍຣິການນີ້ ໃຫ້ດີຂຶ້ນ.

**ມີໃຜອີກ ທີ່ເຫັນ ຂໍ້ມູນ ກ່ຽວກັບທ່ານ ?**

ມີແຕ່ນັກວິຊາການ ທີ່ກ່ຽວຂ້ອງໃນການໃຫ້ການດູແລທ່ານເທົ່ານັ້ນ ທີ່ສາມາດເບິ່ງຂໍ້ມູນກ່ຽວກັບ ທ່ານໄດ້. ຖ້າບໍ່ດັ່ງນັ້ນ ພວກຂ້າພະເຈົ້າ ຈະເຜີຍແຜ່ຂໍ້ມູນ ຂອງທ່ານໄດ້ ກໍ່ຕໍ່ເມື່ອ ທ່ານອະນຸຍາດໃຫ້ ຫຼື ຖ້າມີການຈໍາເປັນຕາມທາງດ້ານກົດໝາຍ ເຊັ່ນວ່າ ໃນກໍລະນີ ເຈັບເປັນແບບກະທັນຫັນ.

**ທ່ານມີສິດເອົ້າອ່າຫຍັງໄດ້ແດ່ ກ່ຽກັບ ເຫດການທີ່ເກີດຂຶ້ນກັບຂໍ້ມູນຂອງທ່ານ ?**

ເມື່ອມີເຫດການເກີດຂຶ້ນ ກ່ຽວກັບຂໍ້ມູນຂອງ ທ່ານ ທ່ານສາມາດມີປາກສຽງໄດ້. ພວກຂ້າພະ ເຈົ້າ ອີງຕາມ ຂໍ້ມູນທີ່ທ່ານໃຫ້ພວກຂ້າພະເຈົ້າ ເພື່ອຊ່ວຍໃຫ້ພວກຂ້າພະເຈົ້າ ໃຫ້ການດູແລ ທີ່ແທບເໝາະ ແກ່ທ່ານ . ຖ້າຫາກທ່ານຕັດສິນໃຈ ບໍ່ໃຫ້ຜູ້ອື່ນຮູ້ ບາງຂໍ້ມູນ ຫຼື ບໍ່ໃຫ້ໃຜເອົາບັນທຶກ ກ່ຽວກັບການຮັບການບໍຣິການຂອງທ່ານ, ອັນນີ້ ກໍ່ແມ່ນສິດຂອງທ່ານ, ແຕ່ວ່າ ມັນຈະກະທົບກະ ເທືອນ ຕໍ່ຄວາມສາມາດໃນການໃຫ້ບໍຣິການທີ່ດີທີ່ສຸດ ແກ່ທ່ານ. ເວລາໃດ ທ່ານຫາກປາຖະໜາ ທີ່ຈະປ່ຽນ ຫຼື ລົບລ້າງ ໜັງສືອານຸຍາດນັ້ນ ທ່ານ ກໍ່ບອກພວກຂ້າພະເຈົ້າໄດ້.

**ຂໍ້ມູນຂອງທ່ານ ຈະຖືກປົກປັກຮັກສາໄວ້ ຄືແນວໃດ ?**

ພວກຂ້າພະເຈົ້າ ມີໜ້າທີ່ປົກປ້ອງ ການປິດລັບ ກ່ຽວກັບການບັນທຶກທີ່ກ່ຽວກັບໂຕທ່ານ. ການເກັບ ຂໍ້ມູນຂອງທ່ານໄວ້ໃຫ້ເປັນຂອງສ່ວນຕົວຂອງທ່ານນັ້ນ ກໍ່ມີກົດໝາຍ ປົກປ້ອງຄືກັນ. ພວກ ຂ້າພະເຈົ້າ ປະຕິບັດຕໍ່ ຂໍ້ມູນຂອງທ່ານແບບປິດລັບຢ່າງເຄັ່ງຂັດທີ່ສຸດ ແລະ ຮັກສາໄວ້ໃຫ້ປອດໄພ.

**ທ່ານສາມາດເບິ່ງຂໍ້ມູນຂອງທ່ານໄດ້ບໍ່ ?**

ໄດ້, ທ່ານມີສິດຂໍເບິ່ງຂໍ້ມູນຂອງທ່ານໄດ້ ແລະ ສາມາດຂໍດັດແກ້ມັນໄດ້ ຖ້າຈໍາເປັນ.

**ມີຄໍາຖາມອື່ນໆບໍ່ ?**

ໃນເວລາ ທີ່ທ່ານເປັນຜູ້ໃຊ້ບໍຣິການຂອງພວກຂ້າພະເຈົ້ານັ້ນ ຖ້າຫາກທ່ານມີ ຄໍາຖາມອື່ນໆ ຫຼື ຈະຕໍ່ວ່າຕໍ່ຂານກ່ຽວກັບ ສິ່ງທີ່ເກີດຂຶ້ນກັບຂໍ້ມູນຂອງທ່ານ ຫຼື ຖ້າຫາກທ່ານປາຖະໜາ ຢາກຈະເບິ່ງ ບົດບັນທຶກ ກ່ຽວກັບໂຕທ່ານ ກະຣຸນາລົມກັບນຶ່ງໃນພວກພະນັກງານຂອງພວກຂ້າພະເຈົ້າ.

The Department of Human Services, 2006